multicultural health communication

Laotian
[DOH-7115]

# ໂຣກຖ່າຍທ້ອງ

## Cryptosporidiosis

### ໂຣກຖ່າຍທ້ອງ Cryptosporidiosis ແມ່ນຫຍັງ?

- Cryptosporidiosis ແມ່ນໂຣກຖ່າຍທ້ອງຊຶ່ງເກີດຈາກແມ່ທ້ອງ Cryptosporidium, ຊຶ່ງແພ່ເຊື້ອພຍາດຢູ່ລຳໄສ້.
- ໄດ້ມີລາຍງານວ່າມີການຕິດເຊື້ອ Cryptosporidium ໃນຕົວຄົນ ແລະ ຢູ່ໃນຟາມຫຼາຍແຫ່ງ, ຢູ່ໃນຕົວສັດລ້ຽງ ແລະ ສັດພື້ນບ້ານ.
- ເຖິງແມ່ນວ່າຈະມີ Cryptosporidium ຫຼາຍຊນິດ, ແຕ່ວ່າມີຊນິດດຽວ, Cryptosporidium parvum, ຊຶ່ງເຊື່ອວ່າເປັນສາເຫດໃຫ້ເກີດການຕິດເຊື້ອໃນຄົນ.
- Cryptosporidiosis ໄດ້ຖືກລາຍງານເຖິງກະຊວງສາທາຣະນະສຸກແຫ່ງຣັດ NSW ແຕ່ປີ 1996. ຈຳນວນຄົນທີ່ເປັນພຍາດນີ້ມີແນວໂນ້ມວ່າຈະສູງຂຶ້ນໃນເດືອນທີ່ອາກາດອຸ່ນຂຶ້ນ.

### ພຍາດນີ້ແຜ່ພາຍຢ່າງໃດ?

- ໂຕແມ່ທ້ອງ Cryptosporidium ມີຢູ່ໃນອາຈົມຂອງຄົນແລະສັດທີ່ມີເຊື້ອນີ້ ແລະ ແຜ່ພາຍໂດຍເສັ້ນທາງ ອາຈົມ-ປາກ.
- ພຍາດນີ້ຈະແຜ່ພາຍໄປໂດຍທີ່ແມ່ທ້ອງຖືກກືນເຂົ້າໄປ.
- ສ່ວນໃຫຍ່ແລ້ວ ການແຜ່ພາຍຈະເກີດຂຶ້ນໂດຍ:
  - ການຕິດຕໍ່ລະຫວ່າງຄົນຕໍ່ຄົນ,ໂດຍສະເພາະໃນຄອບຄົວແລະລະຫວ່າງເດັກນ້ອຍ (ຕົວຢ່າງ, ໃນສູນດູແລເດັກ)
  - ດື່ມນ້ຳທີ່ມີເຊື້ອພຍາດນີ້
  - ລອຍນ້ຳຢູ່ໃນອ່າງທີ່ມີເຊື້ອພຍາດນີ້
  - ທາງອາຫານ (ບໍ່ຄ່ອຍມີ)
  - ຈັບບາຍສັດທີ່ມີເຊື້ອພຍາດນີ້
  - ການຮ່ວມເພດທີ່ມີການຕ້ອງຊູນສານອາຈົມ

- ຍາມທີ່ຕິດໄດ້ງ່າຍທີ່ສຸດແມ່ນຍາມທີ່ຄົນຖ່າຍທ້ອງ, ແຕ່ວ່າອາດຈະຍັງມີແມ່ທ້ອງຖືກຂັບຖ່າຍອອກມາຢູ່ເປັນເວລາຫຼາຍອາທິດ ຫຼັງຈາກອາການຖ່າຍທ້ອງຢຸດແລ້ວ.



NSW GOVERNMENT Health

## ມີອາການຫຍັງແດ່?

ອາການທີ່ມັກເປັນຫຼາຍທີ່ສຸດຂອງ cryptosporidiosis ແມ່ນຖ່າຍເປັນນໍ້າ, ເຈັບບິດໃນທ້ອງ, ຄືງຮ້ອນ, ປຸ້ນທ້ອງ ແລະ ຮາກ. ອາການເຫຼົ່ານີ້ຈະເຮັດໃຫ້ນໍ້າໜັກຕົວຫຼຸດລົງ ແລະ ຮ່າງກາຍຂາດນໍ້າ.

- ອາການເຈັບປ່ວຍຈະປາກົດຄັ້ງແຮກໃນລະຫວ່າງ 1-12 ມື້ (ສະເລ່ຍປະມານ ເຈັດມື້) ຫຼັງຈາກທີ່ຄົນຜູ້ນັ້ນຕິດເຊື້ອແລ້ວ.
- ໃນບາງກໍຣະນີ ອາດຈະບໍ່ສໍ່ສະແດງອາການຫຍັງໝົດ. ຢ່າງໃດກໍດີ, ເຂົາເຈົ້າກໍອາດຈະຍັງສາມາດແຜ່ຜາຍພຍາດໄປໃຫ້ຄົນອື່ນໄດ້ຢູ່.
- ຄົນທີ່ມີສຸຂພາບດີສ່ວນຫຼາຍຈະເຊົາພາຍໃນບໍ່ເກີນສອງອາທິດ.
- ຄົນທີ່ພູມຕ້ານທານບໍ່ແຂງແຮງ ອາດຈະມີອາການຮ້າຍແຮງກວ່ານັ້ນແລະອາດເປັນຢູ່ຫຼາຍອາທິດ.

## ມີການກວດຫາພຍາດຢ່າງໃດແລະປິ່ນປົວວິທີໃດ?

- ຖ້າທ່ານເປັນໂຣກຖ່າຍທ້ອງ, ວິທີດຽວທີ່ຈະບອກໄດ້ວ່າເປັນຍ້ອນ cryptosporidiosis ຫຼືບໍ່ແມ່ນໄປຫາໝໍ ແລະ ເອົາຕົວຢ່າງອາຈົມໄປກວດ.
- ເປັນສິ່ງສໍາຄັນທີ່ຄົນປ່ວຍຖ່າຍທ້ອງຕ້ອງໄດ້ດື່ມນໍ້າຫຼາຍໆເພື່ອຫຼີກເວັ້ນຈາກສະພາວະຮ່າງກາຍຂາດນໍ້າ.
- ບໍ່ມີວິທີການປິ່ນປົວສະເພາະ ສໍາລັບ cryptosporidiosis

## ຈະປ້ອງກັນໄດ້ຢ່າງໃດ?

ເພື່ອປ້ອງກັນບໍ່ໃຫ້ຕິດພຍາດ cryptosporidiosis ເຮົາຕ້ອງ:

- ລ້າງມືໃຫ້ສະອາດທົ່ວເຖິງດີສເມີ ດ້ວຍສະບູແລະນໍ້າກ໊ອກຫຼັງຈາກໃຊ້ຫ້ອງນໍ້າ, ຈັບບາຍສັດ, ປ່ຽນຜ້າອ້ອມ, ຫຼືເຮັດວຽກໃນສວນ, ແລະກ່ອນປຸງແຕ່ງອາຫານແລະເຄື່ອງດື່ມ.
- ຢ່າດື່ມນໍ້າທີ່ບໍ່ທັນຜ່ານກັມມະວິທີ (ຕົວຢ່າງ, ນໍ້າຈາກຫ້ວຍ, ລໍາທານ, ໜອງ ແລະ ເຂື່ອນ). ການດື່ມນໍ້າຈາກແຫຼ່ງນໍ້າເຫຼົ່ານີ້ ນິ່ງນາທີ ຈະຂ້າພຍາດຮວມທັງ cryptosporidiosis ດ້ວຍ.

## ເພື່ອຫຼີກເວັ້ນຈາກການແຜ່ຜາຍ ພຍາດ cryptosporidiosis:

- ໃຫ້ເອົາເດັກນ້ອຍທີ່ຖ່າຍທ້ອງໄວ້ເຮືອນ ບໍ່ໃຫ້ໄປໂຮງຮຽນ, ໂຮງຮຽນອະນຸບານ, ສູນດູແລເດັກ ຫຼື ກຸ່ມຫຼິ້ນ ຈົນກວ່າການຖ່າຍທ້ອງຈະເຊົາຫາຍຂາດ.
- ຜູ້ທີ່ຕ້ອງຈັບບາຍອາຫານ, ພະນັກງານດູແລເດັກ ແລະ ພະນັກງານດູແລສຸຂພາບ ທີ່ຕິດເຊື້ອ cryptosporidiosis ບໍ່ຄວນໄປເຮັດການຈົນກວ່າການຖ່າຍທ້ອງຈະຢຸດລົງ.
- ຢ່າງນ້ອຍເປັນເວລານຶ່ງອາທິດ ຫຼັງຈາກການຖ່າຍທ້ອງຢຸດລົງ, ທ່ານບໍ່ຄວນຈະ: - ໃຊ້ສະອາບນໍ້າ ຫຼື ສະຖານທີ່ລິ້ນເລິງກ່ຽວກັບນໍ້າ - ໃຊ້ຜ້າປູບ່ອນແລະຜ້າເຊັດຕົວຮ່ວມກັບຄົນອື່ນ.

**ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW**



**1300 066 055** [www.health.nsw.gov.au](http://www.health.nsw.gov.au)